ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1925 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 31 ຕຸລາ 2023

# ຂໍ້ຕົກລົງ
# ວ່າດ້ວຍການຮັບຮອງມາດຕະຖານຫ້ອງທົດລອງ

- ອີງຕາມ ກົດໝາຍ ວ່າດ້ວຍມາດຕະຖານ ສະບັບເລກທີ 49/ສພຊ, ລົງວັນທີ 18 ກໍລະກົດ 2014;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 275/ນຍ, ລົງວັນທີ 01 ກັນຍາ 2023;
- ອີງຕາມ ໜັງສືສະເໜີຂອງກົມມາດຕະຖານ ແລະ ວັດແທກ ສະບັບເລກທີ 3491/ກມວ, ລົງວັນທີ 03 ຕຸລາ 2023.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບຄຸ້ມຄອງ, ຕິດຕາມ ກວດກາ ການຮັບຮອງມາດຕະຖານຫ້ອງທົດລອງ ເພື່ອໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ, ລະບຽບການຂອງ ສປປ ລາວ, ພາກພື້ນ ແລະ ສາກົນ ແນໃສ່ຮັບປະກັນການເຄື່ອນໄຫວ ແລະ ການໃຫ້ບໍລິການຂອງຫ້ອງທົດລອງ ໃຫ້ມີຄຸນນະພາບ, ປະສິດທິພາບ, ຖືກຕ້ອງ ແລະ ຊັດເຈນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການຮັບຮອງມາດຕະຖານຫ້ອງທົດລອງ**

ການຮັບຮອງມາດຕະຖານຫ້ອງທົດລອງ ແມ່ນການກວດກາມາດຕະຖານທາງດ້ານເຕັກນິກວິຊາການໃນການທົດສອບ ແລະ ສອບທຽບ ແລະ ອອກໃບຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ ໂດຍກົມມາດຕະຖານ ແລະ ວັດແທກ.

**ມາດຕາ 3 ອະທິບາຍຄຳສັບ**

1. **ຫ້ອງທົດລອງ** ໝາຍເຖິງ ສະຖານທີ່ ທີ່ດຳເນີນການທົດສອບ, ສອບທຽບ ແລະ ການເກັບຕົວຢ່າງ ທີ່ຕິດພັນກັບການທົດສອບ ຫຼື ສອບທຽບ;

2. **ຜູ້ເຄື່ອນໄຫວຫ້ອງທົດລອງ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ນຳໃຊ້ ແລະ ໃຫ້ການບໍລິການຫ້ອງທົດລອງ ທີ່ພົວພັນເຖິງສັງຄົມ ແລະ ໄດ້ສ້າງຕັ້ງຂຶ້ນຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ກ່ຽວກັບຫ້ອງທົດລອງ ຢູ່ ສປປ ລາວ.

## ໝວດທີ 2
## ປະເພດ, ຂົງເຂດ ແລະ ມາດຕະຖານ ຫ້ອງທົດລອງ

**ມາດຕາ 5 ປະເພດຫ້ອງທົດລອງ**

ຫ້ອງທົດລອງ ປະກອບມີ ສອງ ປະເພດ ດັ່ງນີ້:

1. ຫ້ອງທົດລອງການທົດສອບ (Testing Laboratory);
2. ຫ້ອງທົດລອງສອບທຽບ (Calibration Laboratory).

**ມາດຕາ 6 ຫ້ອງທົດລອງການທົດສອບ**

ຫ້ອງທົດລອງການທົດສອບ ແມ່ນຫ້ອງທົດລອງ ທີ່ນຳເອົາຕົວຢ່າງ ເພື່ອເຮັດການວິໄຈ, ວິເຄາະ ແລະ ທົດສອບ ດ້ວຍການນຳໃຊ້ວິທີການ ແລະ ເຄື່ອງມືສະເພາະ ທີ່ຖືກຍອມຮັບຈາກກົມມາດຕະຖານ ແລະ ວັດແທກ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອໃຫ້ໄດ້ຮັບຜົນ ແລະ ຄຸນລັກສະນະສະເພາະຂອງຕົວຢ່າງນັ້ນ.

**ມາດຕາ 7 ຫ້ອງທົດລອງການສອບທຽບ**

ຫ້ອງທົດລອງການສອບທຽບ ແມ່ນຫ້ອງທົດລອງ ທີ່ດຳເນີນການກວດສອບຄວາມຖືກຕ້ອງຂອງເຄື່ອງມື ແລະ ອຸປະກອນວັດແທກ ດ້ວຍການປຽບທຽບກັບແມ່ແບບວັດແທກ ທີ່ມີຄຸນນະພາບ ຫຼື ຄວາມຊັດເຈນສູງກວ່າ.

**ມາດຕາ 8 ຂົງເຂດຂອງຫ້ອງທົດລອງ**

ຫ້ອງທົດລອງ ປະກອບມີ ແປດ ຂົງເຂດ ດັ່ງນີ້:

1. ຫ້ອງທົດລອງຂົງເຂດກົນຈັກ (Mechanical field);
2. ຫ້ອງທົດລອງຂົງເຂດໄຟຟ້າ (Electrical field);
3. ຫ້ອງທົດລອງຂົງເຂດຊີວະ (Biological field);
4. ຫ້ອງທົດລອງຂົງເຂດເຄມີ (Chemical field);
5. ຫ້ອງທົດລອງຂົງເຂດການກໍ່ສ້າງ (Construction field);
6. ຫ້ອງທົດລອງຂົງເຂດການທົດສອບແບບບໍ່ທຳລາຍ (Non-Destructive testing field);
7. ຫ້ອງທົດລອງຂົງເຂດການສອບທຽບອຸປະກອນວັດແທກ (Measurement - Calibration field);
8. ຫ້ອງທົດລອງຂົງເຂດການຢາ (Pharmaceutical field).

**ມາດຕາ 9 ຫ້ອງທົດລອງຂົງເຂດກົນຈັກ**

ຫ້ອງທົດລອງຂົງເຂດກົນຈັກ ແມ່ນການວັດແທກຄຸນລັກສະນະສະເພາະຂອງກົນຈັກ ແລະ ການທົດລອງທາງດ້ານຟີຊິກຂອງວັດຖຸອຸປະກອນ, ໂຄງສ້າງ ລວມເອົາໂລຫະໜັກ, ຜະລິດຕະພັນໂລຫະ ແລະ ການທົດສອບໂຄງສ້າງຂອງໂລຫະ.

**ມາດຕາ 10 ຫ້ອງທົດລອງຂົງເຂດໄຟຟ້າ**

ຫ້ອງທົດລອງຂົງເຂດໄຟຟ້າ ແມ່ນການວັດແທກຄຸນລັກສະນະສະເພາະຂອງເອເລັກໂຕຣນິກ ແລະ ການທົດສອບທາງດ້ານເຄື່ອງໃຊ້ໄຟຟ້າ, ອຸປະກອນການສື່ສານ ລວມທັງການຄ້າອຸດສາຫະກຳ ແລະ ອຸປະກອນວິສະວະກຳ ແລະ ການທົດສອບ ກ່ຽວກັບຄວາມທົດທານຂອງຊິ້ນສ່ວນ ແລະ ອຸປະກອນຕໍ່ສະພາບແວດລ້ອມ.

**ມາດຕາ 11 ຫ້ອງທົດລອງຂົງເຂດຊີວະ**

ຫ້ອງທົດລອງຂົງເຂດຊີວະ ແມ່ນການທົດສອບ ແລະ ການວັດແທກ ທາງດ້ານຊີວະຈຸລິນຊີ, ອຸປະກອນຊີວະເຄມີ ແລະ ຜະລິດຕະພັນທີ່ລວມທັງອາຫານ, ການທົດສອບທາງດ້ານເຄມີຕາມການກຳນົດ ແລະ ການເຕີບໂຕຂອງແບັກທີເຣຍ, ສຸຂະນາໄມຂອງພືດ ແລະ ສັດ.

**ມາດຕາ 12 ຫ້ອງທົດລອງຂົງເຂດເຄມີ**

ຫ້ອງທົດລອງຂົງເຂດເຄມີ ແມ່ນການວິເຄາະທາງດ້ານເຄມີ ແລະ ການກວດສອບ ສຳລັບການວິເຄາະເຄມີ, ການທົດສອບເຄມີສຳລັບວັດຖຸທຸກປະເພດ, ການທົດສອບປະສົມປະສານທາງດ້ານຟີຊິກ ທີ່ກຳນົດຄວາມໜາແໜ້ນ, ທົດສອບ ແລະ ການສອບທຽບອຸປະກອນຟີຊິກເຄມີ.

**ມາດຕາ 13 ຫ້ອງທົດລອງຂົງເຂດການກໍ່ສ້າງ**

ຫ້ອງທົດລອງຂົງເຂດການກໍ່ສ້າງ ແມ່ນການວັດແທກຄວາມແຂງແກ່ນ, ທົດສອບຟີຊິກເຄມີ ສຳລັບອຸປະກອນ, ໂຄງສ້າງ ແລະ ຊິ້ນສ່ວນທີ່ກ່ຽວຂ້ອງກັບໂຄງສ້າງອາຄານ ແລະ ໂຄງສ້າງ ຂອບເຂດນີ້ລວມເອົາການກວດສອບແບບບໍ່ທຳລາຍ ສຳລັບຄອນກີດ ແລະ ທົດສອບດິນ.

**ມາດຕາ 14 ຫ້ອງທົດລອງຂົງເຂດການທົດສອບແບບບໍ່ທຳລາຍ**

ຫ້ອງທົດລອງຂົງເຂດການທົດສອບແບບບໍ່ທຳລາຍ ແມ່ນການດຳເນີນການກວດສອບທຸກພາກສ່ວນ ແລະ ໂຄງສ້າງ ດ້ວຍວິທີການ ສາຍແສງລັງສີ, ຄື່ນສຽງຄວາມຖີ່ສູງ, ສາຍຊຶມ ແລະ ແມ່ເຫລັກໄຟຟ້າ.

**ມາດຕາ 15 ຫ້ອງທົດລອງຂົງເຂດການສອບທຽບອຸປະກອນວັດແທກ**

ຫ້ອງທົດລອງຂົງເຂດການສອບທຽບອຸປະກອນວັດແທກ ແມ່ນການສອບທຽບສຳລັບເຄື່ອງມື ແລະ ອຸປະກອນການວັດແທກ, ເຄື່ອງມືທີ່ນຳໃຊ້ທາງດ້ານເຄມີ, ຟີຊິກ, ກົນຈັກ, ເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຣນິກ, ເຄື່ອງອຸປະກອນ ການວັດແທກສຽງ ແລະ ການສັ່ນສະເທືອນ, ລຳແສງ ແລະ ຄວາມສະຫວ່າງ, ອຸນຫະພູມ, ການວັດແທກຄວາມຊັດເຈນຂອງປະລິມານຄວາມຍາວ, ເວລາ, ນ້ຳໜັກປະລິມານການປ່ຽງເບນ, ຄວາມສາມາດບັນຈຸ, ຄວາມດັນການວັດແທກ ແລະ ການສອບທຽບທຸກອຸປະກອນການວັດແທກ.

**ມາດຕາ 16 ຫ້ອງທົດລອງຂົງເຂດການຢາ**

ຫ້ອງທົດລອງຂົງເຂດການຢາ ແມ່ນທົດສອບ ຫຼື ວັດແທກທາງດ້ານຊີວະ, ເຄມີ ແລະ ຜະລິດຕະພັນ ທີ່ກ່ຽວຂ້ອງກັບການຢາ ແລະ ເຄື່ອງສຳອາງສຳລັບການກຳນົດທາງດ້ານການຢາ.

**ມາດຕາ 17 ມາດຕະຖານຫ້ອງທົດລອງ**

ຫ້ອງທົດລອງ ຕ້ອງມີມາດຕະຖານຕົ້ນຕໍ ດັ່ງນີ້:

1. ຕ້ອງມີຂອບເຂດການທົດລອງ ແລະ ໂຄງຮ່າງການຈັດຕັ້ງຢ່າງເປັນລະບົບ ໃນການບໍລິຫານວຽກງານຄຸ້ມຄອງຫ້ອງທົດລອງ;

2. ການຄຸ້ມຄອງສະພາບແວດລ້ອມຂອງຫ້ອງທົດລອງ ທີ່ແທດເໝາະກັບສະພາບເງື່ອນໄຂຕາມການກຳນົດຂອງການທົດລອງ;

3. ສ້າງ, ປັບປຸງ, ຄຸ້ມຄອງເອກະສານ ແລະ ບົດບັນທຶກ ທີ່ກ່ຽວຂ້ອງກັບການຄຸ້ມຄອງບໍລິຫານຫ້ອງທົດລອງເປັນປະຈຳ;

4. ດຳເນີນປະຕິບັດວຽກງານການທົດລອງຢ່າງລະອຽດໂດຍສະເພາະ ມີວິທີການທົດລອງ, ການເກັບຕົວຢ່າງ, ການບໍລິຫານຂໍ້ຮ້ອງຮຽນຂອງລູກຄ້າ, ການດຳເນີນການບໍລິຫານສິ່ງທີ່ບໍ່ສອດຄ່ອງ ແລະ ຄຸ້ມຄອງລະບົບຂໍ້ມູນຫ້ອງທົດລອງ;

5. ການທົດສອບວິທີການ ແລະ ການຊຳນານງານຂອງພະນັກງານເປັນປະຈຳ ເພື່ອຕອບສະໜອງໄດ້ກັບການຄຸ້ມຄອງ ແລະ ການລາຍງານຜົນທີ່ຊັດເຈນ;

6. ລະບົບການຄຸ້ມຄອງບໍລິຫານຄຸນນະພາບທີ່ສອດຄ່ອງ ຕາມການກຳນົດຂອງມາດຕະຖານແຫ່ງຊາດ ພາກພື້ນ ແລະ ສາກົນ;

7. ການກວດກາຕິດຕາມພາຍໃນເປັນປະຈຳ ແລະ ຕາມວາລະຂອງການກວດກາຕິດຕາມພາຍໃນ;

8. ການຝຶກອົບຮົມພາຍໃນອົງກອນເປັນປະຈຳ ແລະ ມີຄວາມຕໍ່ເນື່ອງ;

9. ເຂົ້າຮ່ວມຂະບວນການປຽບທຽບຜົນການທົດລອງ ກັບອົງກອນທີ່ກ່ຽວຂ້ອງທີ່ເຊື່ອຖືໄດ້ ແລະ ເປັນທີ່ຍອມຮັບຂອງອົງການຈັດຕັ້ງສາກົນ.

**ມາດຕາ 18 ເງື່ອນໄຂໃນການສະເໜີຂໍຮັບຮອງມາດຕະຖານຫ້ອງທົດລອງ**

ການຮັບຮອງມາດຕະຖານຫ້ອງທົດລອງ ປະກອບມີເງື່ອນໄຂ ດັ່ງນີ້:

1. ສຳເລັດການສ້າງຕັ້ງຫ້ອງທົດລອງແລ້ວ;

2. ຕ້ອງມີເຄື່ອງມື, ອຸປະກອນ ການທົດສອບ ຫຼື ສອບທຽບ ຢູ່ໃນຫ້ອງທົດລອງຕາມແຕ່ລະປະເພດຄົບຊຸດ;

3. ມີພະນັກງານ ທີ່ມີຄວາມຮູ້, ຄວາມສາມາດ ແລະ ຊ່ຽວຊານສະເພາະດ້ານ ຖືກຕ້ອງຕາມຫ້ອງທົດລອງແຕ່ລະປະເພດ;

4. ຕ້ອງມີບັນຊີລາຍການເຄື່ອງມື, ອຸປະກອນການທົດລອງ ແລະ ທາດເຄມີ ທີ່ໃຊ້ໃນການທົດສອບ ແລະ ສອບທຽບ.

## ໝວດທີ 3
## ຂັ້ນຕອນການຮັບຮອງມາດຕະຖານຫ້ອງທົດລອງ

**ມາດຕາ 19 ການສະເໜີຂໍຮັບຮອງມາດຕະຖານຫ້ອງທົດລອງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສະເໜີຂໍຮັບຮອງມາດຕະຖານຫ້ອງທົດລອງ ຕ້ອງຍື່ນຄຳຮ້ອງຕໍ່ກົມມາດຕະຖານ ແລະ ວັດແທກ ໂດຍປະກອບມີເອກະສານ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມ;

2. ຄູ່ມືຄຸນນະພາບ, ຄູ່ມືການທົດສອບ ແລະ ສອບທຽບທີ່ກ່ຽວຂ້ອງ;

3. ບັນຊີລາຍການ ເຄື່ອງມື, ອຸປະກອນການທົດລອງ ແລະ ເຄມີ ທີ່ນຳໃຊ້ໃນການທົດສອບ ແລະ ສອບທຽບ;

4. ໃບທະບຽນບັນຊີເຄມີ;

5. ໃບຢັ້ງຢືນການສອບທຽບເຄື່ອງມື, ອຸປະກອນການທົດລອງ ທີ່ນຳໃຊ້ໃນຫ້ອງທົດລອງ;

6. ໃບຢັ້ງຢືນຄວາມຊຳນານງານຂອງຜູ້ດຳເນີນການທົດສອບ ຫຼື ສອບທຽບ (Proficiency Testing Certificate) ແລະ ການສົມທຽບຜົນການກວດສອບພາຍໃນ (Inter-Lab Comparison);

7. ເອກະສານອື່ນ ທີ່ຈຳເປັນ.

**ມາດຕາ 20 ການພິຈາລະນາຮັບຮອງມາດຕະຖານຫ້ອງທົດລອງ**

ພາຍຫຼັງໄດ້ຮັບເອກະສານ ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງຂໍ້ຕົກລົງສະບັບນີ້, ກົມມາດຕະຖານ ແລະ ວັດແທກ ຈະລົງກວດກາ ແລະ ປະເມີນຫ້ອງທົດລອງ ພາຍໃນ ສິບຫ້າ ວັນລັດຖະການ ນັບຕັ້ງແຕ່ວັນໄດ້ຮັບເອກະສານ.

ພາຍຫຼັງລົງກວດກາ ແລະ ປະເມີນຫ້ອງທົດລອງ ກົມມາດຕະຖານ ແລະ ວັດແທກ ຕ້ອງອອກໃບຢັ້ງຢືນຮັບຮອງລະບົບຫ້ອງທົດລອງ ພາຍໃນ ຫ້າ ວັນລັດຖະການ ຫາກເຫັນວ່າຫ້ອງທົດລອງ ມີເງື່ອນໄຂສອດຄ່ອງກັບ ມາດຕະຖານແຫ່ງຊາດ, ລະບຽບການຂອງພາກພື້ນ ຫຼື ສາກົນ ທີ່ກ່ຽວຂ້ອງ.

ກໍລະນີ ຫ້ອງທົດລອງ ມີເງື່ອນໄຂບໍ່ສອດຄ່ອງກັບ ມາດຕະຖານແຫ່ງຊາດ, ລະບຽບການຂອງພາກພື້ນ ຫຼື ສາກົນ, ກົມມາດຕະຖານ ແລະ ວັດແທກ ຕ້ອງແນະນຳໃຫ້ຜູ້ເຄື່ອນໄຫວຫ້ອງທົດລອງປັບປຸງແກ້ໄຂໃຫ້ໄດ້ຕາມມາດຕະຖານ.

ກໍລະນີ ບໍ່ສາມາດອອກໃບຢັ້ງຢືນຮັບຮອງລະບົບຫ້ອງທົດລອງ ກົມມາດຕະຖານ ແລະ ວັດແທກ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ສະເໜີຊາບ.

**ມາດຕາ 21 ການດັດແກ້ເນື້ອໃນໃບຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ**

ການດັດແກ້ເນື້ອໃນໃບຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ ແມ່ນການແກ້ໄຂຂໍ້ມູນຂອງໃບຢັ້ງຢືນ ເປັນຕົ້ນ ສະຖານທີ່ຕັ້ງ, ຂົງເຂດການທົດສອບ, ສອບທຽບ ຂອງຫ້ອງທົດລອງ.

ຜູ້ທີ່ມີຈຸດປະສົງ ດັດແກ້ເນື້ອໃນໃບຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ ຕ້ອງປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງຂໍ້ຕົກລົງສະບັບນີ້ ສະເໜີຕໍ່ກົມມາດຕະຖານ ແລະ ວັດແທກ ເພື່ອລົງກວດກາ ແລະ ປະເມີນຫ້ອງທົດລອງຄືນໃໝ່.

**ມາດຕາ 22 ອາຍຸ ແລະ ການຂໍຕໍ່ອາຍຸໃບຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ**

ໃບຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ ມີອາຍຸນຳໃຊ້ ສາມ ປີ ແລະ ສາມາດຕໍ່ໄດ້.

ການຂໍຕໍ່ອາຍຸໃບຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ ຜູ້ເຄື່ອນໄຫວຫ້ອງທົດລອງ ຕ້ອງປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງຂໍ້ຕົກລົງສະບັບນີ້ ຍື່ນຄຳຮ້ອງຕໍ່ກົມມາດຕະຖານ ແລະ ວັດແທກ ກ່ອນໃບຢັ້ງຢືນຮັບຮອງດັ່ງກ່າວຈະໝົດອາຍຸ ເກົ້າສິບ ວັນ ເພື່ອລົງກວດກາ ແລະ ປະເມີນຫ້ອງທົດລອງຄືນໃໝ່.

**ມາດຕາ 23 ການໂຈະ ຫຼື ຍົກເລີກ ໃບຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ**

ຜູ້ດຳເນີນກິດຈະການຫ້ອງທົດລອງ ທີ່ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28 ຂອງຂໍ້ຕົກລົງສະບັບນີ້ ຈະຖືກກ່າວເຕືອນ ແລະ ເຮັດບົດບັນທຶກໃຫ້ປັບປຸງແກ້ໄຂ ພາຍໃນ ຫົກສິບ ວັນ.

ຖ້າຫາກບໍ່ສາມາດປັບປຸງແກ້ໄຂຕາມກຳນົດເວລາຂອງບົດບັນທຶກ ຜູ້ດຳເນີນກິດຈະການຫ້ອງທົດລອງ ສາມາດສະເໜີຕໍ່ກຳນົດເວລາໄດ້ຕື່ມອີກ ສາມສິບ ວັນ ເພື່ອປັບປຸງແກ້ໄຂ ແຕ່ຕ້ອງແຈ້ງຕໍ່ກົມມາດຕະຖານ ແລະ ວັດແທກ ເປັນລາຍລັກອັກສອນ ພ້ອມທັງໃຫ້ເຫດຜົນພຽງພໍທີ່ຊັດເຈນ.

ໃນກໍລະນີ ບໍ່ສາມາດປັບປຸງແກ້ໄຂຕາມເວລາທີ່ກຳນົດໄວ້ ຈະຖືກຍົກເລີກໃບຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ.

ຜູ້ດຳເນີນກິດຈະການຫ້ອງທົດລອງ ສາມາດສະເໜີຂໍຍົກເລີກໃບຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ ດ້ວຍຄວາມສະໝັກໃຈ ແຕ່ຕ້ອງສະເໜີຕໍ່ກົມມາດຕະຖານ ແລະ ວັດແທກ ເປັນລາຍລັກອັກສອນ ເພື່ອເກັບກຳຂໍ້ມູນ.

# ໝວດທີ 4
# ສິດ ແລະ ພັນທະ ຂອງຜູ້ເຄື່ອນໄຫວຫ້ອງທົດລອງ

**ມາດຕາ 24 ສິດ ຂອງຜູ້ເຄື່ອນໄຫວຫ້ອງທົດລອງ**

ຜູ້ເຄື່ອນໄຫວຫ້ອງທົດລອງ ມີສິດ ດັ່ງນີ້:

1. ເຄື່ອນໄຫວ ແລະ ດຳເນີນການທົດລອງ ຕາມຂອບເຂດຂອງການຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ;
2. ນຳໃຊ້ອຸປະກອນ, ເຄື່ອງມືທົດສອບ ທີ່ຜ່ານການຢັ້ງຢືນການສອບທຽບ ແລະ ຄຸນນະພາບ;
3. ໂຄສະນາ ກ່ຽວກັບຄຸນນະພາບ ແລະ ການໃຫ້ບໍລິການ ຂອງຫ້ອງທົດລອງຂອງຕົນ;
4. ສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ;
5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 25 ພັນທະ ຂອງຜູ້ເຄື່ອນໄຫວຫ້ອງທົດລອງ**

ຜູ້ເຄື່ອນໄຫວຫ້ອງທົດລອງ ມີພັນທະ ດັ່ງນີ້:

1. ຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນ ຈາກການເຄື່ອນໄຫວຫ້ອງທົດລອງ;
2. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃຫ້ແກ່ກົມມາດຕະຖານ ແລະ ວັດແທກ ໃນການລົງກວດກາ ແລະ ປະເມີນຫ້ອງທົດລອງ;
3. ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ການຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ ຕາມລະບຽບການ;
4. ເກັບຮັກສາເອກະສານ ກ່ຽວກັບລະບົບຄຸ້ມຄອງບໍລິຫານຄຸນນະພາບຫ້ອງທົດລອງ, ຜົນການທົດສອບ, ສອບທຽບ ແລະ ບົດບັນທຶກທາງວິຊາການ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

# ໝວດທີ 5
# ຂໍ້ຫ້າມ

**ມາດຕາ 26 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ໃບຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ ໂດຍບໍ່ໄດ້ຮັບອະນຸຍາດ
2. ສ້າງອຸປະສັກກີດຂວາງ ການປະຕິບັດຂອງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານຮັບຮອງມາດຕະຖານຫ້ອງທົດລອງ;
3. ໃຫ້ ຫຼື ເປັນສື່ກາງໃນການໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ກັບການຮັບຮອງມາດຕະຖານຫ້ອງທົດລອງ;
4. ພຶດຕິກຳອື່ນ ທີ່ເປັນການລະເມີດຕໍ່ລະບຽບ ແລະ ກົດໝາຍ.

**ມາດຕາ 27 ຂໍ້ຫ້າມ ສຳລັບຜູ້ເຄື່ອນໄຫວຫ້ອງທົດລອງ**

ຫ້າມຜູ້ເຄື່ອນໄຫວຫ້ອງທົດລອງ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ໃບຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ ໝົດອາຍຸ;
2. ດັດແກ້ເນື້ອໃນໃບຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ ໂດຍບໍ່ໄດ້ຮັບອະນຸຍາດ;

3. ເຄື່ອນໄຫວ ແລະ ດຳເນີນການທົດລອງ ເກີນຂອບເຂດຂອງການຮັບຮອງມາດຕະຖານຫ້ອງທົດລອງ;

4. ສ້າງອຸປະສັກກີດຂວາງ ການປະຕິບັດຂອງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານຮັບຮອງມາດຕະຖານຫ້ອງທົດລອງ;

5. ໃຫ້ສິນບົນ, ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ ແລະ ພະນັກງານ ທີ່ຮັບຜິດຊອບວຽກງານທີ່ກ່ຽວຂ້ອງກັບການຮັບຮອງມາດຕະຖານຫ້ອງທົດລອງ;

6. ປອມແປງເອກະສານ ແລະ ປົດບັງຄວາມຈິງ;

7. ສ້າງມົນລະພິດຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

8. ພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 28 ຂໍ້ຫ້າມ ສຳລັບເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ພັກພວກຂອງຕົນ;

2. ຂໍເອົາ, ທວງເອົາ, ຮັບສິນບົນ ຫຼື ຫາຜົນປະໂຫຍດອື່ນໂດຍບໍ່ຖືກຕ້ອງ;

3. ກົດໜ່ວງ ຖ່ວງດຶງ ແລະ ແກ່ຍາວເວລາໃນການພິຈາລະນາເອກະສານ;

4. ເມີນເສີຍຕໍ່ກັບການລາຍງານ ກ່ຽວກັບເຄື່ອນໄຫວ ແລະ ດຳເນີນການທົດລອງ ເກີນຂອບເຂດຂອງການຮັບຮອງມາດຕະຖານຫ້ອງທົດລອງ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

5. ເປີດເຜີຍຂໍ້ມູນເອກະສານຂອງຜູ້ເຄື່ອນໄຫວຫ້ອງທົດລອງ ກ່ອນໄດ້ຮັບອະນຸຍາດ;

6. ພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ການຄຸ້ມຄອງວຽກງານຮັບຮອງມາດຕະຖານຫ້ອງທົດລອງ

**ມາດຕາ 29 ການຄຸ້ມຄອງວຽກງານຮັບຮອງມາດຕະຖານຫ້ອງທົດລອງ**

ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານຮັບຮອງມາດຕະຖານຫ້ອງທົດລອງ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ປະກອບດ້ວຍ ສອງ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ: ກົມມາດຕະຖານ ແລະ ວັດແທກ;

2. ຂັ້ນແຂວງ: ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.

**ມາດຕາ 30 ສິດ ແລະ ໜ້າທີ່ ຂອງກົມມາດຕະຖານ ແລະ ວັດແທກ**

1. ຄົ້ນຄ້ວາສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບວຽກງານຮັບຮອງມາດຕະຖານຫ້ອງທົດລອງ;

2. ໂຄສະນາເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມທັງນິຕິກຳ ທີ່ກ່ຽວຂ້ອງກັບວຽກງານຮັບຮອງມາດຕະຖານຫ້ອງທົດລອງ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດທົ່ວປະເທດ;

3. ພິຈາລະນາ ອອກ, ຕໍ່ອາຍຸ, ໂຈະ ແລະ ຍົກເລີກ ໃບຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ ແລະ ສຳເນົາໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ເພື່ອຕິດຕາມ ແລະ ເກັບກຳຂໍ້ມູນສະຖິຕິ;

4. ລົງຕິດຕາມ, ກວດກາ ແລະ ປະເມີນຫ້ອງທົດລອງ ທີ່ສະເໜີຂໍຮັບຮອງມາດຕະຖານຫ້ອງທົດລອງໃໝ່;

5. ລົງຕິດຕາມ, ກວດກາ ແລະ ປະເມີນຄືນຫ້ອງທົດລອງ ທີ່ໄດ້ຮັບຮອງມາດຕະຖານຫ້ອງທົດລອງຜ່ານມາ ຢ່າງໜ້ອຍ ໜຶ່ງ ຄັ້ງຕໍ່ປີ ຫຼື ຕາມການຮ້ອງຮຽນ ໂດຍບໍ່ໄດ້ແຈ້ງໃຫ້ຮູ້ລ່ວງໜ້າ;

6. ສ້າງແຜນການ ແລະ ງົບປະມານ ໃນການຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຕາມກຳນົດເວລາ;

7. ພົວພັນ, ປະສານງານ ແລະ ຮ່ວມມືກັບອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານຮັບຮອງມາດຕະຖານຫ້ອງທົດລອງ;

8. ໃຫ້ຄຳແນະນຳ ແລະ ອຳນວຍຄວາມສະດວກ ກ່ຽວກັບວຽກງານຮັບຮອງມາດຕະຖານຫ້ອງທົດລອງ;

9. ຮັບ ແລະ ພິຈາລະນາຄຳສະເໜີຈາກປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ລວມທັງແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບວຽກງານຮັບຮອງມາດຕະຖານຫ້ອງທົດລອງ;

10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານຮັບຮອງມາດຕະຖານຫ້ອງທົດລອງໃຫ້ຂັ້ນເທິງຊາບ;

11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**

1. ໂຄສະນາເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ພ້ອມທັງນິຕິກຳ ທີ່ກ່ຽວຂ້ອງກັບວຽກງານຮັບຮອງມາດຕະຖານຫ້ອງທົດລອງ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ;

2. ຮັບຄຳຮ້ອງການຂໍຮັບຮອງມາດຕະຖານຫ້ອງທົດລອງ ແລ້ວສົ່ງໃຫ້ກົມມາດຕະຖານ ແລະ ວັດແທກພິຈາລະນາ;

3. ຕິດຕາມ ແລະ ເກັບກຳຂໍ້ມູນສະຖິຕິ ກ່ຽວກັບການອອກ, ຕໍ່ອາຍຸ, ໂຈະ ແລະ ຍົກເລີກ ໃບຢັ້ງຢືນຮັບຮອງມາດຕະຖານຫ້ອງທົດລອງ;

4. ປະສານຊ່ວຍແຈ້ງຂໍ້ມູນ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຂໍຮັບຮອງມາດຕະຖານຫ້ອງທົດລອງ;

5. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການກວດກາ, ຕິດຕາມຫ້ອງທົດລອງ ທີ່ໄດ້ຮັບຮອງມາດຕະຖານຫ້ອງທົດລອງ;

6. ແນະນຳ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຜູ້ເຄື່ອນໄຫວຫ້ອງທົດລອງ ກ່ຽວກັບຂັ້ນຕອນການປະກອບເອກະສານຂໍການຮັບຮອງມາດຕະຖານຫ້ອງທົດລອງ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 32 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມມາດຕະຖານ ແລະ ວັດແທກ ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ຂະແໜງການທີ່ກ່ຽວຂ້ອງ ເຜີຍແຜ່ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 33 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າວັນ ແລະ ລົງໃນຈົດໝາຍເຫດທາງລັດຖະການ.

ລັດຖະມົນຕີ

ມະໄລທອງ ກົມມະສິດ